Education
Public Schools

**Drive and park safely near schools**




# ຂໍ້ມູນເລື້ອງຄວາມປອດໄພຕາມ ທ້ອງຖນົນ

ທ່ານມີໜ້າທີ່ຮັບຜິດຊອບໃນ ຄວາມປອດໄພຂອງລູກທ່ານໃນເວລາທີ່ພວກເຂົາເດີນທາງໄປໂຮງ ຮຽນທັງໄປແລະກັບ.

## ຂັບຣົດແລະຈອດດ້ວຍຄວາມປອດ ໄພໃກ້ ໂຮງຮຽນ

ເວລາໂຮງຮຽນເຂົ້າແລະເລີກຂອງມື້ ເຂົ້າໂຮງຮຽນເປັນເວລາທີ່ຫຍຸ້ງ ສຳລັບ ຄົນຍ່າງແລະຄົນຂັບຣົດຢູ່ ນອກໂຮງຮຽນ.

**ທ່ານສາມາດຊ່ວຍເຮັດໃຫ້ເດັກມີ ຄວາມປອດໄພດ້ວຍການຈື່ຈຳສິ່ງ ຕ່າງໆຕໍ່ລົງໄປນີ້:**

- ສົ່ງແລະຮັບເດັກນ້ອຍຢູ່ຖນົນຟາກ ດຽວກັບໂຮງຮຽນ
- ຢ່າຮ້ອງເອີ້ນເອົາເດັກນ້ອຍຈາກ ຟາກກົງກັນຂ້າມຂອງຖນົນຈັກ ເທື່ອ – ມັນເປັນອັນຕະລາຍທີ່ສຸດ
- ຈົ່ງມີຄວາມລະມັດລະວັງເພີ້ມໃນ ເວ ລາຂັບຣົດຢູ່ໃນເຂດໂຮງຮຽນ ທີ່ມີ ປ້າຍ40km
- ຈົ່ງປະຕິບັດຕາມປ້າຍບອກຈອດໝົດ ທຸກອັນ – ອັນນີ້ແມ່ນຊ່ວຍ ເຮັດໃຫ້ ເດັກນ້ອຍມີຄວາມປອດໄພເທົ່າທີ່ເປັນ ໄປໄດ້
- ຈົ່ງຈອດຣົດແບບມີຄວາມຮັບຜິດຊອບ ເຖິງແມ່ນວ່າທ່ານຕ້ອງຍ່າງ ໄກຈາກ ປະຕູຮົ້ວຂອງໂຮງຮຽນແດ່ ກໍຕາມ
- ຢ່າຈອດຊ້ອນກັນຈັກເທື່ອ – ມັນ ເປັນ ສິ່ງຜິດກົດໝາຍແລະຍັງເຮັດ ໃຫ້ເດັກ ນ້ອຍມີຄວາມສ່ຽງອີກ ດ້ວຍ
- ຢ່າກັບຣົດແບບຢູເທີນ ຫຼື ກັບຣົດ ແບບ ສາມຈຸດ (three-point turn) ຢູ່ຂ້າງນອກໂຮງຮຽນເພາະວ່າມັນຈະເຮັດໃຫ້ເດັກມີ ຄວາມສ່ຽງຕໍ່ອັນຕະລາຍ
- ເປັນແບບຢ່າງໃຫ້ລູກໆຂອງທ່ານ ໃນການເປັນຄົນຍ່າງ ແລະ ຄົນຂັບ ຣົດທີ່ມີຄວາມປອດໄພ ແລະ ເຫັນໃຈຄົນອື່ນ.

**ເພື່ອເອົາການອູ້ນຊູເພີ້ມຕື່ມ**

ເຂົ້າໄປເບິ່ງໂຄງການ ການສຶກສາ ເລື້ອງຄວາມປອດໄພຕາມທ້ອງ ຖນົນ ຂອງທາງກະຊວງ ທີ່: https://education.nsw.gov.au/road-safety-education ຫຼືເປີດເຂົ້າເບິ່ງ https://education.nsw.gov.au ແລະຊອກຫາເອົາ ການສຶກສາ ເລື້ອງ ຄວາມປອດໄພຕາມ ທ້ອງຖນົນ.

**ໃນເວລາເດີນທາງດ້ວຍຣົດ ໃຫ້ແນ່ ໃຈວ່າລູກຂອງທ່ານ:**

- ໃຊ້ຕັ່ງນັ່ງບູສເຕີຖ້າພວກເຂົາມີອາຍຸ ລະຫວ່າງ 4ປີແລະ7ປີ – ມັນເປັນ ກົດໝາຍ
- ໃສ່ເຂັມຂັດນິຣະໄພຢູ່ໃນຕັ່ງນັ່ງ ຂອງ ພວກເຂົາໃຫ້ຖືກຕ້ອງ
- ເຂົ້າແລະອອກຈາກຣົດທາງ 'ປະຕູທີ່ປອດໄພ' – ປະຕູຫຼັງຂອງຣົດທີ່ຢູ່ເບື້ອງທາງຍ່າງສເມີ
- ບໍ່ຖືກປ່ອຍປະໃຫ້ຢູ່ຜູ້ດຽວໃນຣົດ ຈັກ ເທື່ອ.



**ສູງເຖິງ6ເດືອນ**
ຕັ່ງນັ່ງໃນຣົດຂອງເດັກແບບຫັນໜ້າ ໄປທາງຫຼັງທີ່ໄດ້ຮັບການຮັບ ຮອງ ແລ້ວ



**6ເດືອນ ຫາ 4ປີ**
ຕັ່ງນັ່ງໃນຣົດຂອງເດັກແບບຫັນໜ້າ ໄປທາງຫຼັງ ຫຼື ຫັນໄປທາງໜ້າ ທີ່ໄດ້ຮັບ ການຮັບຮອງແລ້ວ



**4ປີ+**
ຕັ່ງນັ່ງໃນຣົດຂອງເດັກແບບຫັນໜ້າ ໄປທາງໜ້າ ຫຼື ຕັ່ງບູສເຕີ ທີ່ໄດ້ຮັບ ການຮັບຮອງແລ້ວ



**145ຊຕມ ຫຼື ສູງກວ່າ**
ຄວາມສູງຢ່າງຕ່ຳສຸດທີ່ຖືກແນະນຳ ໃນ ການໃຊ້ເຂັມຂັດນິຣະໄພຂອງ ຜູ້ໃຫຍ່ແບບຜ່ານໜ້າຕັກ